ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ,

ໂທລະຄົມມະນາຄົມ ແລະ ການສື່ສານ

# ສະຖິຕິ ຂະແໜງ ໄປສະນີ,ໂທລະຄົມ ແລະ ການສື່ສານ ປີ 2015




ຈັດພິມໂດຍ: ກົມແຜນການ ແລະ ການຮ່ວມມື, ກະຊວງ ປທສ.

ນະຄອນຫຼວງວຽງຈັນ,ປີ2016.

***<u>ຄະນະຊີ້ນຳ:</u>***

- ທ່ານ ປອ ທັນສະໄໝ ກົມມະສິດ ລັດຖະມົນຕີ ກະຊວງ ປທສ
- ທ່ານ ພູຊົງ ຈິດຣູບໂລກ ຫົວໜ້າກົມ ແຜນການ ແລະ ການຮ່ວມມື
- ທ່ານ ເສີນະຄອນ ເພັດວິຫານ ຮອງຫົວໜ້າກົມ ແຜນການ ແລະ ການຮ່ວມມື

***<u>ຄະນະຄົ້ນຄ້ວາ ແລະ ຮຽບຮຽງ:</u>***

- ທ່ານ ເສີນະຄອນ ເພັດວິຫານ ຮອງຫົວໜ້າກົມ ແຜນການ ແລະ ການຮ່ວມມື
- ທ່ານ ຈັນທອນ ຈັນທະວົງ ຫົວໜ້າ ພະແນກ ສະຖິຕິ
- ທ່ານ ນາງ ວິໄລພອນ ເທບພະວົງ ຮອງຫົວໜ້າ ພະແນກ ສະຖິຕິ
- ທ່ານ ອຸທິດ ຊາພັກດີ ວິຊາການ ພະແນກ ສະຖິຕິ
- ທ່ານ ໄຊພອນ ພົມມະວັນ ວິຊາການ ພະແນກ ສະຖິຕິ

***<u>ຄະນະຮັບຜິດຊອບເນື້ອໃນ</u>***

- ທ່ານ ຈັນທອນ ຈັນທະວົງ ຫົວໜ້າ ພະແນກ ສະຖິຕິ
- ທ່ານ ນາງ ວິໄລພອນ ເທບພະວົງ ຮອງຫົວໜ້າ ພະແນກ ສະຖິຕິ
- ທ່ານ ອຸທິດ ຊາພັກດີ ວິຊາການ ພະແນກ ສະຖິຕິ
- ທ່ານ ໄຊພອນ ພົມມະວັນ ວິຊາການ ພະແນກ ສະຖິຕິ

***<u>ຄະນະອອກແບບ</u>***

- ທ່ານ ຈັນທອນ ຈັນທະວົງ ຫົວໜ້າພະແນກ ສະຖິຕິ
- ທ່ານ ອຸທິດ ຊາພັກດີ ວິຊາການ ພະແນກ ສະຖິຕິ

***<u>ສອບຖາມຂໍ້ມູນ:</u>***

ກະຊວງ, ໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ
ກົມແຜນການ ແລະ ການຮ່ວມມື
ພະແນກ ສະຖິຕິ
ໂທລະສັບ/ແຟັກ: 021 219902, ອີເມວ: planning.dpt.mpt@mpt.gov.la.

ສຳນັກງານຕັ້ງຢູ່: 01000 ຖະໜົນ ລ້ານຊ້າງ ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປລາວ

## ຄຳນຳ

ໃນທ່າມກາງທີ່ທົ່ວພັກ, ທົ່ວກອງທັບ ແລະ ທົ່ວປວງຊົນ ກຳລັງລິເລີ່ມຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ x ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມຄັ້ງທີ VIII (2016-2020) ຂອງລັດຢ່າງເປັນຂະບວນຟົດຟື້ນ, ຊຶ່ງໄດ້ກຳນົດວິໄສທັດ, ເປົ້າໝາຍການພັດທະນາແບບຍືນຍົງຕາມທິດສີຂຽວ, ຖືເອົາວຽກງານໄປສະນີ, ໂທລະຄົມມະນາຄົມ ແລະ ອິນເຕີເນັດ ເປັນເຄື່ອງມືສຳຄັນສອດທ້ອຍເຂົ້າທຸກຂົງເຂດວຽກງານເພື່ອຂັບເຄື່ອນການພັດທະນາປະເທດ, ໃນເງື່ອນໄຂທີ່ອາຊຽນກາຍເປັນປະຊາຄົມເສດຖະກິດຢ່າງເປັນທາງການ. ສະນັ້ນການທີ່ພວກເຮົາມີລະບົບການເກັບກຳ, ລາຍງານຂໍ້ມູນ ສະຖິຕິ ທີ່ມີຄວາມກະຈ່າງແຈ້ງ, ຊັດເຈນ ແລະ ມີຂໍ້ມູນຫຼາກຫຼາຍປະເພດ ຈະສາມາດຕອບສະໜອງຄວາມຕ້ອງການທາງດ້ານຂໍ້ມູນ ທັງພາຍໃນ ແລະ ສາກົນ.

ການຈັດພິມປຶ້ມ ສະຖິຕິ ຂະແໜງ ປທສ ຫົວທີ 2 ມີຈຸດປະສົງເຜີຍແຜ່ຂໍ້ມູນສະຖິຕິ ຂອງຂະແໜງການໃຫ້ພາກສ່ວນອື່ນທີ່ຊົມໃຊ້ ເຂົ້າໃນກິດຈະກຳຕ່າງໆຂອງຕົນເຊັ່ນ: ການຕັດສິນໃຈ, ການຄົ້ນຄ້ວາ, ວິໄຈ, ວາງແຜນໃນວຽກງານຂອງຕົນ ແລະ ເປັນການສະແດງໃຫ້ເຫັນເຖິງລະດັບການພັດທະນາ ແລະ ການຂະຫຍາຍຕົວຂອງຂະແໜງການ ປທສ ໃນ ສປປ ລາວ.

ການພັດທະນາດ້ານ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານໃນໂລກມີການຂະຫຍາຍຕົວແບບກ້າວກະໂດດຢ່າງບໍ່ຢຸດຢັ້ງຈາກການລາຍງານຂອງອົງການສະຫາພາບໂທລະຄົມສາກົນ (ITU) ປີ 2015 ໃຫ້ຮູ້ວ່າປະຈຸບັນມີປະມານ 3.2 ຕື້ຄົນ ສາມາດເຊື່ອມໂຍງ ແລະ ນຳໃຊ້ ອິນເຕີເນັດ ເຊິ່ງກວມປະມານ 43.4% ຂອງພົນລະເມືອງໂລກ, ມີຜູ້ລົງທະບຽນນຳໃຊ້ມືຖື 7.1 ຕື້ຄົນ ຫລື ປະມານ 95% ຂອງພົນລະເມືອງທັງໝົດ. ໃນນັ້ນອັດຕາການໃຊ້ໂທລະສັບມືຖືຄວາມໄວສູງ (Broadband) ຊຶ່ງອົງການດັ່ງກ່າວຄາດວ່າປະມານ 3.5 ຕື້ຄົນ.

ສຳລັບ ສປປ ລາວ, ໃນປີ 2015 ມີຈຳນວນຜູ້ ລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະ ແລະ ມືຖື ທຽບໃສ່ປະຊາກອນປະມານ 85%, ມີຜູ້ຈັບຈອງນຳໃຊ້ອິນເຕີເນັດແບບຖາວອນ 21% ແລະ ອິນເຕີເນັດຜ່ານມືຖື3G 30% ທຽບໃສ່ປະຊາກອນທົ່ວປະເທດ, ໃນນັ້ນໄດ້ມີການຂະຫຍາຍເຄືອຂ່າຍດ້ານໂທລະຄົມມະນາຄົມໄປສູ່ຂົງເຂດຕ່າງໆລວມທັງເຄືອຂ່າຍ 2G, 3G ແລະ 4G ໃນບັນດາຕົວເມືອງໃຫຍ່ ແລະ ເຄືອຂ່າຍອິນເຕີເນັດ ທັງ ມີສາຍ ແລະ ບໍ່ມີສາຍ, ເຮັດໃຫ້ມີການນຳໃຊ້ການບໍລິການດັ່ງກ່າວຂອງມວນຊົນຢ່າງກວ້າງຂວາງ.

ປຶ້ມ ສະຖິຕິ ຂະແໜງ ປທສ ປະຈຳປີ 2015 ແມ່ນໄດ້ຜ່ານການຄົ້ນຄ້ວາ, ສັງລວມ ແລະ ຮຽບຮຽງຂໍ້ມູນໂດຍ ກົມແຜນການ ແລະ ການຮ່ວມມື, ກະຊວງ ໄປສະນີ,ໂທລະຄົມມະນາຄົມ ແລະ ການສື່ສານ (ປທສ) ຊຶ່ງເປັນປຶ້ມຂໍ້ມູນສະຖິຕິ ຂອງຂະແໜງການ ໂດຍກວມເອົາຂົງເຂດ ການບໍລິການ ແລະ ນຳໃຊ້ດ້ານ ໄປສະນີ, ໂທລະຄົມມະນາຄົມ, ອິນເຕີເນັດ ແລະ ເຕັກໂນໂລຊີຂໍ້ມູນຂ່າວສານ.

ໃນໂອກາດນີ້ ຂໍສະແດງຄວາມຂອບໃຈນຳບັນດາກົມ, ສູນ, ສະຖາບັນ, ຫົວໜ່ວຍວິສາຫະກິດຜູ້ປະກອບການດ້ານ ໄປສະນີ, ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທຸກພາກສ່ວນ ທີ່ກ່ຽວຂ້ອງ ທີ່ໄດ້ໃຫ້ການຮ່ວມມື, ອຳນວຍຄວາມສະດວກໃຫ້ແກ່ການເກັບກຳຂໍ້ມູນ, ປະກອບສ່ວນສະໜອງຂໍ້ມູນໄດ້ເປັນຢ່າງດີ ຫວັງຢ່າງຍິ່ງວ່າບັນດາຂໍ້ມູນສະຖິຕິເຫຼົ່ານີ້ ຈະເປັນປະໂຫຍດ ຕໍ່ບັນດາທ່ານ ແລະ ທຸກພາກສ່ວນທັງພາຍໃນ ແລະ ສາກົນເປັນຢ່າງດີ.

ລັດຖະມົນຕີ

ດຣ. ຫັນສະໄໝ ກົມມະສິດ

# ສາລະບານ


I. **ຄວາມເປັນມາ**…………………………………………………………………….4

1. ຂອບເຂດກ່ຽວກັບສະຖິຕິຂອງກະຊວງ....................................................................4
2. ຈຸດປະສົງ.............................................................................................................4

II. **ສະຖິຕິດ້ານໄປສະນີ**………………………………………………………………..6

1. ຕາຕະລາງຂໍ້ມູນສະຖິຕິ ທາງດ້ານເຄືອຂ່າຍດ້ານໄປສະນີ...........................................6
2. ການບໍລິການ ໄປສະນີພາຍໃນປະເທດ.....................................................................7
3. ການບໍລິການໄປສະນີ ລະຫວ່າງປະເທດ...................................................................8

III. **ສະຖິຕິດ້ານໂທລະຄົມມະນາຄົມ / ໄອຊີທີ**………………………………………11

1. ເຄືອຂ່າຍດ້ານໂທລະຄົມມະນາຄົມ.........................................................................14
2. ຄວາມອາດສາມາດຮອງຮັບໃນການໃຫ້ບໍລິການດ້ານໂທລະຄົມມະນາຄົມ/ໄອຊີທີ.........15
3. ບໍລິມາດການຊົມໃຊ້ ດ້ານໂທລະຄົມມະນາຄົມ/ໄອຊີທີ.............................................16
4. ບໍລິມາດການຊົມໃຊ້ ແຍກໄປຕາມແຂວງ................................................................18
5. ບໍລິມາດການຜະລິດດ້ານໂທລະຄົມມະນາຄົມ /ໄອຊີທີ.............................................23
6. ສະຖິຕິດ້ານການເຊື່ອມຕໍ່ ( ບໍລິມາດທີ່ຜ່ານ ສູນອິນເຕີເນັດ ແຫ່ງຊາດ )..……………………...………..25
7. ດ້ານເຄືອຂ່າຍບໍລິຫານລັດດ້ວຍເອເລັກໂຕຣນິກ.........................................................27
8. ສະຖິຕິທີ່ກ່ຽວຂ້ອງກັບວຽກງານໄອຊີທີ ......................................................................28

IV. **ສະຖິຕິການລົງທຶນໃນຂະແໜງການ ປທສ** ………………………………………31

V. **ສະຖິຕິດ້ານບຸກຄະລາກອນຂັ້ນສູນກາງ ທີ່ຂຶ້ນກັບ ກະຊວງ ປທສ**……………………………34

## I. ຄວາມເປັນມາ

ເພື່ອໃຫ້ສອດຄ່ອງ ກັບແນວທາງນະໂຍບາຍຂອງພັກ-ລັດ ແລະ ຂະບວນການທາງດ້ານນິຕິກຳ ກ່ຽວກັບວຽກງານ ສະຖິຕິ ຂໍ້ມູນ ຊຶ່ງ ສປປ ລາວ ຂອງພວກເຮົາ ໄດ້ປະກາດນຳໃຊ້ກົດໝາຍວ່າດ້ວຍ ສະຖິຕິໃນປີ 2010 ແລະ ຍຸດທະສາດການພັດທະນາລະບົບ ສະຖິຕິ ແຫ່ງຊາດ ປີ 2010-2020 ເວົ້າລວມ, ເວົ້າສະເພາະ ຂະແໜງການ ປທສ ຂອງພວກເຮົາກໍ່ໄດ້ນຳມາຜັນຂະຫຍາຍ ເປັນອັນສະເພາະຂອງຂະແໜງການ.

ວຽກງານສະຖິຕິ ມີຄວາມສຳຄັນຕໍ່ກັບທຸກໆອົງກອນຂະແໜງການ, ມັນເປັນເຄື່ອງມືອັນສຳຄັນໃນການຊ່ວຍໃຫ້ນັກບໍລິຫານ ແລະ ພະນັກງານຂັ້ນນຳພາຄຸ້ມຄອງຕ່າງໆສາມາດຕັດສິນໃຈ, ລວມທັງການກຳນົດຍຸດທະສາດ, ແຜນພັດທະນາ ແລະ ແຜນການ ເປັນແຕ່ລະໄລຍະ ເພື່ອພັດທະນາຂະແໜງການຂອງຕົນ.

ໃນປຶ້ມກົດໝາຍວ່າດ້ວຍສະຖິຕິໄດ້ນິຍາມໄວ້ດັ່ງນີ້:

“ສະຖິຕິ ແມ່ນຂໍ້ມູນ ຫຼື ຕົວເລກ ທີ່ໄດ້ມາຈາກການສຳຫຼວດ ແລະ ການລາຍງານບໍລິຫານ ໂດຍຜ່ານຂະບວນການເກັບກຳ, ສັງລວມ, ການຄິດໄລ່, ການປຸງແຕ່ງ, ການວິໄຈ ແລະ ການວິເຄາະຕາມຫຼັກການວິທະຍາສາດສະຖິຕິ”.

ຄະນະນຳ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ຍາມໃດກໍ່ໃຫ້ຄວາມສຳຄັນ ແລະ ຖືເອົາວຽກງານສະຖິຕິ ເປັນປັດໃຈທາງດ້ານຂໍ້ມູນເພື່ອການວາງແຜນ ແລະ ການຕັດສິນໃຈ, ຊຶ່ງຜ່ານມາກໍ່ໄດ້ເອົາໃຈໃສ່ໃນການປັບປຸງວຽກງານ ແລະ ຄວາມເຂັ້ມແຂງວຽກງານ ສະຖິຕິ ຕະຫລອດມາ, ໂດຍໄດ້ມີການກຳນົດຫຼັກການ, ລະບຽບ ແລະ ມາດຕະການ ໃນການຈັດຕັ້ງ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ການເຄື່ອນໄຫວວຽກງານ ສະຖິຕິໃຫ້ເປັນລະບົບ, ຮັບປະກັນປະສິດທິພາບ ແນໃສ່ໃຫ້ມີຂໍ້ມູນສະຖິຕິ ຄົບຖ້ວນ, ຊັດເຈນ, ທັນເວລາ ແລະ ສອດຄ່ອງກັບຄວາມເປັນຈິງ, ສາມາດເປັນບ່ອນອີງໃຫ້ແກ່ການກຳນົດທິດທາງນະໂຍບາຍ, ແຜນພັດທະນາຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

### 1. ຂອບເຂດກ່ຽວກັບສະຖິຕິຂອງ ກະຊວງ

ປຶ້ມ ສະຖິຕິ ຫົວນີ້ໄດ້ສັງລວມເອົາບັນດາຂໍ້ມູນທີ່ໄດ້ເກັບກຳ ແລະ ລາຍງານບໍລິຫານຊຶ່ງເອີ້ນວ່າສະຖິຕິ ທາງການ ເຊິ່ງແຫຼ່ງຂໍ້ມູນທີ່ສຳຄັນ ແມ່ນໄດ້ມາຈາກ: ບັນດາກົມ, ສູນ, ສະຖາບັນ, ບໍລິສັດ ຜູ້ປະກອບການ ແລະ ບັນດາພະແນກ ປທສ ແຂວງ ໃນຂອບເຂດທົ່ວປະເທດ.

### 2. ຈຸດປະສົງ

ເພື່ອລາຍງານ ຂໍ້ມູນ ສະຖິຕິ ຂອງ ຂະແໜງ ປທສ ໃຫ້ແກ່ພາກສ່ວນຕ່າງໆ ທີ່ເປັນຜູ້ຊົມໃຊ້ຂໍ້ມູນເຂົ້າໃນກິດຈະການຕ່າງໆ ເຊັ່ນ: ການວິເຄາະ, ວິໄຈ, ຄົ້ນຄ້ວາ ສ້າງແຜນການ ແລະ ແຜນຍຸດທະສາດການພັດທະນາ. ແລະ ເພື່ອໃຫ້ເປັນຂໍ້ມູນທີ່ເປັນປະໂຫຍດແກ່ນັກວິຊາການ, ນັກຄົ້ນຄ້ວາ, ນັກບໍລິຫານ, ນັກວາງແຜນການ ແລະ ໃຫ້ຄະນະນຳໃນການ ຕັດສິນໃຈ.

# ສະຖິຕິດ້ານໄປສະນີ

II. **ສະຖິຕິດ້ານ ໄປສະນີ**

ການໃຫ້ບໍລິການທາງດ້ານຕາໜ່າງ ໄປສະນີ ໄດ້ມີການຂະຫຍາຍລົງໄປທົ່ວທຸກແຂວງໃນທົ່ວປະເທດ, ໃນນັ້ນມີ ບໍລິສັດ ລັດວິສາຫະກິດ ແລະ ເອກະຊົນທີ່ໃຫ້ບໍລິການ ທາງດ້ານ ໄປສະນີ 6 ບໍລິສັດ, ໃນນັ້ນ ຫ້ອງການ ໄປສະນີ ທັງໝົດໃນທົ່ວປະເທດມີ 158 ແຫ່ງ ຊຶ່ງສາມາດຕອບສະໜອງການບໍລິການ ແລະ ຮັບໃຊ້ແກ່ມວນຊົນໄດ້ຢ່າງສະດວກ ໃນການຮັບສົ່ງຈົດໝາຍ ແລະ ສິ່ງຂອງຜ່ານລະບົບ ໄປສະນີ ທັງພາຍໃນ ແລະ ຕ່າງປະເທດ.

1. **ຕາຕະລາງຂໍ້ມູນ ສະຖິຕິ ທາງດ້ານເຄືອຂ່າຍ ໄປສະນີ**

ສະຖິຕິ ທີ່ຊີ້ບອກໃຫ້ເຫັນການພັດທະນາໂຄງຮ່າງພື້ນຖານທາງດ້ານໄປສະນີຂອງ ສປປ ລາວ ຕາມຕາຕະລາງ ຂໍ້ມູນດັ່ງລຸ່ມນີ້:

**ຕາຕະລາງ1: ບັນດາບໍລິສັດ ຜູ້ປະກອບການທີ່ໃຫ້ ບໍລິການ ທາງດ້ານ ໄປສະນີ**

| ລ/ດ | ຊື່ບໍລິສັດໄປສະນີໃນທົ່ວປະເທດ |
|---|---|
| 1 | ບໍລິສັດ ລັດວິສາຫະກິດໄປສະນີລາວ (ປນລ) |
| 2 | ບໍລິສັດ ລາວບໍລິການຂົນສົ່ງ ຈຳກັດ (TNT) |
| 3 | ບໍລິສັດ ລາວຄູເລຍ&ເຫຼດດິງ ເຊີວິດຂາເຂົ້າ-ອອກ ຈຳກັດ (LCT Co.,Ltd) |
| 4 | ບໍລິສັດ ພີທີແອກາໂກລາວ ຈຳກັດ (PT Air Cargo Co.,Ltd) |
| 5 | ບໍລິສັດ OCS LAO COMPANY LIMITED (OCS) |
| 6 | ບໍລິສັດ DHL EXPRESS LAOS SOLE Co.,LTD (DHL) |

**ຕາຕະລາງ2: ຕາໜ່າງເຄືອຂ່າຍ ໄປສະນີ**

| ລ/ດ | ເນື້ອໃນເຄືອຂ່າຍ ໄປສະນີ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | **ຫ້ອງການ ໄປສະນີ ທັງໝົດທົ່ວປະເທດ** | **ແຫ່ງ** | **139** | **157** | **158** |
| 1 | ຫ້ອງການລັດວິສາຫາກິດ ໄປສະນີລາວ ທັງໝົດທົ່ວປະເທດ | ແຫ່ງ | 128 | 146 | 149 |
| **2** | ຫ້ອງການ ໄປສະນີ ບໍລິສັດ ເອກະຊົນ | ແຫ່ງ | 11 | 11 | 11 |
| II | **ຫ້ອງການ ໄປສະນີ ຂັ້ນເມືອງ** | | | | |
| **1** | ຫ້ອງການ ໄປສະນີ ປະຈຳເມືອງ | ແຫ່ງ | 128 | 128 | 143 |
| III | **ສາຂາ ແລະ ຈ່ານ ຈຳໜ່າຍ ໄປສະນີພັນ** | | | | |
| **1** | ຈ່ານ ໄປສະນີ | ແຫ່ງ | 54 | 63 | 54 |
| **2** | ສາຂາຈຳໜ່າຍສະແຕມ | ແຫ່ງ | 107 | 107 | 107 |

ໝາຍເຫດ: ຫ້ອງການ ໄປສະນີ ທັງໝົດ ມີຈຳນວນ 158 ແຫ່ງ ໃນນັ້ນລວມມີຂອງເອກະຊົນ 11 ແຫ່ງ.

## 2. ການ ບໍລິການ ໄປສະນີ ພາຍໃນປະເທດ.

ດ້ານການໃຫ້ ບໍລິການ ໄປສະນີ ພາຍໃນປະເທດ ຈະລວມມີ ການບໍລິການ ຮັບຝາກ, ຈັດສົ່ງ ແລະ ແຈກຢາຍເຄື່ອງຝາກທາງ ໄປສະນີ ໄປຍັງຈຸດໝາຍປາຍທາງຕ່າງໆ ທີ່ຢູ່ພາຍໃນ ປະເທດ ຢ່າງສະດວກ ແລະ ເປັນລະບົບ ເຊັ່ນ: ໄປສະນີພັນ (ຈົດໝາຍ, ໄປສະນີບັດ, ເອກະສານ, ໜັງສືພິມ, ວາລະສານ, ສິ່ງພິມ, ສິ່ງຂອງຫໍ່ນ້ອຍ ຫລື ເຄື່ອງຝາກປະເພດອື່ນ ທີ່ມີນໍ້າໜັກບໍ່ເກີນ 2 ກິໂລກຣາມ ຕໍ່ໜຶ່ງຊອງ ຫລື ໜຶ່ງຫໍ່.....), ພັດສະດຸ ໄປສະນີ ແມ່ນ ເມດ່ວນພິເສດ EMS.

**ຕາຕະລາງ3: ບໍລິມາດການໃຫ້ ບໍລິການ ໄປສະນີ ພາຍໃນປະເທດ**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ໄປສະນີພັນ | ກິໂລ | 12,862 | 7,818 | 8,454 |
| 2 | ພັດສະດຸໄປສະນີ | ກິໂລ | 47,731 | 38,554 | 28,351 |
| 3 | ຈົດໝາຍ | ສະບັບ | 34,266 | 31,072 | 26,794 |
| 4 | ສິ່ງຂອງຫໍ່ນ້ອຍ | ຫໍ່ | 222 | 217 | 720 |
| 5 | ສິ່ງພິມວາລະສານ | ສະບັບ | 3,866 | 2,227 | 2,203 |
| 6 | ໜັງສືພິມ | ສະບັບ | 18,512 | 13,196 | 13,328 |
| 7 | ເມດ່ວນ (EMS) | ສະບັບ | 42,591 | 40,495 | 37,446 |

ແຫຼ່ງຂໍ້ມູນ: ກົມໄປສະນີ

### ວິເຄາະການ ບໍລິການ ແຕ່ລະປະເພດທາງດ້ານໄປສະນີ ພາຍໃນປະເທດ ແຕ່ປີ 2013-2015



### 3. ການ ບໍລິການ ໄປສະນີ ລະຫວ່າງປະເທດ

ການໃຊ້ ບໍລິການ ໄປສະນີລະຫວ່າງປະເທດ ກໍ່ໄດ້ມີການ ບໍລິການ ແລະ ຂະຫຍາຍຕົວເປັນປົກກະຕິໃນການຮັບຝາກ, ຈັດສົ່ງ ແລະ ແຈກຢາຍ ເຄື່ອງຝາກທາງ ໄປສະນີ ລະຫວ່າງປະເທດເຊັ່ນ: ໄປສະນີພັນ-ສິ່ງລະຫ່ວາງປະເທດເຊັ່ນ: (ຈົດໝາຍ, ໄປສະນີບັດ, ເອກະສານ, ໜັງສືພິມ, ວາລະສານ, ສິ່ງພິມ, ສິ່ງຂອງຫໍ່ນ້ອຍ ຫລື ເຄື່ອງຝາກປະ ເພດອື່ນ ທີ່ມີນໍາ້ໜັກບໍ່ເກີນ 2 ກິໂລກຣາມ ຕໍ່ໜຶ່ງຊອງ ຫລື ໜຶ່ງຫໍ່.....), ພັດສະດຸໄປສະນີ ແມ່ນເມດ່ອນພິເສດ (EMS) ແລະ ເມດ່ອນ (FedEX).

**ຕາຕະລາງ4: ບໍລິມາດການໃຊ້ບໍລິການດ້ານໄປສະນີ ລະຫວ່າງປະເທດ**

| ລ/ດ | ເນື້ອໃນ | ຫົວ ໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | **ໄປສະນີພັນ** | **ກິໂລ** | 64,485 | 37,236 | 62,259 |
| | -ຂາອອກ | | 23,328 | 13,005 | 21,951 |
| | - ຂາເຂົ້າ | | 41,157 | 24,231 | 40,309 |
| 2 | **ພັດສະດຸ** | **ກິໂລ** | 469,893 | 186,323 | 555,751 |
| | - ຂາອອກ | | 171,549 | 79,508 | 240,689 |
| | - ຂາເຂົ້າ | | 298,344 | 106,815 | 315,062 |
| 3 | **ຈົດໝາຍ** | **ສະບັບ** | 221,372 | 190,862 | 249,400 |
| | - ຂາອອກ | | 109,766 | 103,558 | 133,555 |
| | - ຂາເຂົ້າ | | 111,606 | 87,304 | 115,845 |
| 4 | **ສິ່ງຂອງຫໍ່ນ້ອຍ** | **ຫໍ່** | 21,290 | 19,262 | 20,709 |
| | - ຂາອອກ | | 7,991 | 6,627 | 5,943 |
| | - ຂາເຂົ້າ | | 13,299 | 12,635 | 14,766 |
| 5 | **ສິ່ງພິມວາລະສານ** | **ສະບັບ** | 66,222 | 55,493 | 46,132 |
| | - ຂາອອກ | | 6,620 | 2,822 | 2,176 |
| | - ຂາເຂົ້າ | | 59,602 | 52,671 | 43,956 |
| 6 | **ໄປສະນີບັດ** | **ສະບັບ** | 262,591 | 214,291 | 186,923 |
| | - ຂາອອກ | | 260,164 | 210,637 | 185,212 |
| | - ຂາເຂົ້າ | | 2,427 | 3,654 | 1,711 |
| 7 | **ເມດ່ອນ** EMS | **ສະບັບ** | 44,664 | 41,299 | 40,223 |
| | - ຂາອອກ | | 17,708 | 15,031 | 11,792 |
| | - ຂາເຂົ້າ | | 26,956 | 26,268 | 28,431 |
| 8 | **ເມດ່ອນ** FedEX | **ສະບັບ** | 5,511 | 6,137 | 9,252 |
| | - ຂາອອກ | | 1,151 | 1,435 | 2,812 |
| | - ຂາເຂົ້າ | | 4,360 | 4,702 | 6,440 |

**ສົມທຽບການຂະຫຍາຍຕົວຂອງການ ບໍລິການ ໄປສະນີ ພັນ ແລະ ພັດສະດຸ ລະຫວ່າງປະເທດ (ຂາອອກ-ຂາເຂົ້າ).**






# ສະຖິຕິໂທລະຄົມ/ໄອຊີທີ

III. **ສະຖິຕິ ໂທລະຄົມມະນາຄົມ / ໄອຊີທີ**

ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ນັບມື້ນັບມີບົດບາດ ແລະ ກາຍເປັນເຄື່ອງມືອັນສຳຄັນຢ່າງຍິ່ງ ໃນວຽກງານການຄຸ້ມຄອງ ບໍລິຫານ, ວຽກງານປ້ອງກັນຊາດ–ປ້ອງກັນຄວາມສະຫງົບ, ການພັດທະນາ ເສດຖະກິດ–ສັງຄົມ, ການເຜີຍແຜ່ຂ່າວສານ, ການຮ່ວມມືກັບສາກົນ ແລະ ອື່ນໆ ລວມທັງກິດຈະກຳປະຈຳວັນ ຂອງປະຊາຊົນເຮົາ ນັບມື້ນັບຫຼາຍຂື້ນ.

ການພັດທະນາ ເຕັກໂນໂລຊີ ທາງດ້ານ ຂະແໜງການ ໂທລະຄົມມະນາຄົມ ແລະ ໄອຊີທີ ຂອງໂລກມີການ ຂະຫຍາຍຕົວຢ່າງວ່ອງໄວ ແບບກ້າວກະໂດດ, ກັບໃນຊຸມປີມໍ່ໆມານີ້ ທາງອົງການ ໂທລະຄົມສາກົນ ໄດ້ໃຫ້ຮູ້ວ່າ ປະຈຸບັນ ຜູ້ທີ່ສາມາດເຂົ້າໃຊ້ອິເຕີເນັດໄດ້ ປະມານ 3,2 ຕື້ ຫຼືປະມານ 43,4 % ຂອງພົນລະເມືອງຂອງໂລກ ແລະ ມີການຊົມໃຊ້ມືຖື ເຖິງ 7,1 ຕື້ ຫຼື ເທົ່າກັບ 95% ແລະ ການລົງທະບຽນນຳໃຊ້ຕັ້ງໂຕະປະມານ 1,06 ຕື້ ແລະ ໃນນັ້ນ ປະຊາກອນທີ່ໃຊ້ມືຖືກໍ່ມີທ່າວງທ່າເພີ່ມຂື້ນ ໃນຂະນະທີ່ ສປປ ລາວ ເຮົານອນຢູ່ໃນ ອັນດັບທີ 138 ຂອງອັນ ດັບການພັດທະນາຂອງໂລກ ( IDI in Global Rank).

ສປປ ລາວ ເຮົາກໍ່ເຊັ່ນດຽວກັນ ໃນປະຈຸບັນ ເຫັນວ່າໄດ້ມີຫຼາຍຂະແໜງການ ທັງພາກລັດ ແລະ ພາກ ເອກະຊົນ ທັງໃນລະດັບສູນກາງ ແລະ ລະດັບທ້ອງຖິ່ນໄດ້ມີການນຳໃຊ້ລະບົບ ICT ເຂົ້າໃນການບໍລິຫານຫຼາຍພໍ ສົມຄວນ ໃນນັ້ນບໍລິສັດ ວິສາຫະກິດ ດ້ານໂທລະຄົມມະນາຄົມ ຈຳນວນ 5 ບໍລິສັດ ທີ່ໃຫ້ບໍລິການ, ມີລະບົບຕາ ໜ່າງສາຍກາບໄຍແສງ ທັງໝົດ 67,351 ກິໂລແມັດ ຊຶ່ງກວມເຖິງຕົວເມືອງເທດສະບານແຂວງ 18 ແຂວງ ແລະ 148 ເມືອງໃນທົ່ວປະເທດ, ມີການຂະຫຍາຍເຄືອຂ່າຍໂທລະສັບມືຖື ລວມທັງລະບົບ 2G,3G ແລະ ມີການລິ ເລີ່ມຕິດຕັ້ງ 4G, ພ້ອມນັ້ນກໍ່ສືບຕໍ່ຊຸກຍູ້ໃຫ້ບັນດາບໍລິສັດ ຜູ້ປະກອບການຂະຫຍາຍເຄືອຂ່າຍຂອງຕົນລົງສູ່ເຂດ ຊົນນະບົດ ແລະ ເຂດຈຸດສຸມພັດທະນາ.

**ຮູບພາບປະກອບ ທີ1: ແຜນທີ່ ສະແດງຂໍ້ມູນທາງດ້ານເຄືອຂ່າຍ ຮັບ-ສົ່ງ ສັນຍານໂທລະສັບມືຖື ໃນທົ່ວປະເທດ**



**ຕາຕະລາງ 5: ບໍລິສັດ ຜູ້ປະກອບການທາງດ້ານ ໂທລະຄົມ.**

| Name of operator | Technology/Service | Ownership |
|---|---|---|
| **Enterprise Telecom du Laos (ETL)** | PSTN<br>2.5 G( GSM 900/1800,GPRS)<br>3 G ( WCDMA 2.1 GHz)<br>ISP ( Dail up, ADL, HIL, VPN) | 100% Lao PDR Government |
| **Lao Telecom Company (LTC)** | PSTN<br>2.5 G( GSM 900/1800,GPRS)<br>3 G ( WCDMA)lauched July 2008<br>ISP ( Dail up, ADL, IP Star) | 51% Lao Government<br>49% Shennington ( Thailand) |
| **Star Telecom ( UNITEL)** | PSTN<br>2.5 G( GSM 900/1800,GPRS)<br>3 G ( WCDMA)<br>ISP ( Dail up, ADL) | 51% Lao Government<br>49% VietTel( Vietname) |
| **Vimpelcom ( Beeline)** | 2.5 G( GSM 900/1800,Edge)<br>Wimax | 22% Lao PDR Government<br>78% VimpelCom |
| **Sky Telecom** | Fiber, FTTx,WiFi & Quad Play<br>DPLC,IPLC,Dark Fiber &MPLS<br>IPTV,VOIP,IDC,BISS & SI<br>Mobile Broadband ( BB-WiFi,BB Mobile 3G/4G ) | 100% Lao PDR Government |

**ຕາຕະລາງ6: ສະຖິຕິ ການນຳໃຊ້ ໄອຊີທີ ຂອງໂລກໃນປະຈຸບັນ**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2015 |
|---|---|---|---|
| 1 | ຈຳນວນປະຊາກອນທີ່ສາມາດເຂົ້າໃຊ້ອິນເຕີເນັດໃນທົ່ວໂລກໄດ້ | ຕື້ | 3,2 |
| 2 | ກວມໃນອັດຕາ ຂອງປະຊາກອນໂລກທີ່ໃຊ້ ອິນເຕີເນັດ | % | 43,4 |
| 3 | ຈຳນວນປະຊາກອນທີ່ລົງທະບຽນນຳໃຊ້ໂທລະສັບມືຖື ໃນທົ່ວໂລກ | ຕື້ | 7,1 |
| 4 | ອັດຕາການຊົມໃຊ້ມືຖື ຂອງປະຊາກອນ ໃນທົ່ວໂລກ | % | 95 |
| 5 | ຈຳນວນຜູ້ລົງທະບຽນໃຊ້ໂທລະສັບຕັ້ງໂຕະ ໃນທົ່ວໂລກ | ຕື້ | 1.06 |
| 6 | ຈຳນວນປະຊາກ່ອນທີ່ໃຊ້ມືຖື Broadband ໃນທົ່ວໂລກ | ຕື້ | 3.5 |
| 7 | ຈຳນວນຜູ້ລົງທະບຽນນຳໃຊ້ Fixed Broadband ໃນທົ່ວໂລກ | ຕື້ | 0.8 |

ແຫລ່ງຂໍ້ມູນ: Measuring the Information society Report 2015-MISR2015-ES-E, ITU

1. **ເຄືອຂ່າຍດ້ານ ໂທລະຄົມມະນາຄົມ**

ເຄືອຂ່າຍທາງດ້ານ ໂທລະຄົມມະນາຄົມ ໄດ້ມີການຂະຫຍາຍຕົວໄປສູ່ຂົງເຂດຕ່າງໆຊຶ່ງພວກເຮົາມີການຕິດຕັ້ງ ລະບົບສາຍກາບໃຍແສງ ປະມານ 67,351 ກິໂລແມັດ ໃນນັ້ນລວມທັງເຄືອຂ່າຍທີ່ເປັນ ສາຍສົ່ງແຫ່ງຊາດ ແລະ ເຄືອຂ່າຍຂອງວິສາຫະກິດ ຊຶ່ງກວມເຖິງບັນດາຕົວເມືອງເທດສະບານເມືອງ ແລະ ແຂວງທັງໝົດໃນທົ່ວປະເທດຊຶ່ງສັນຍານ ໂທລະສັບມືຖື ແມ່ນ ກວມໄດ້ (100%) ຂອງຈໍານວນແຂວງ ແລະ ຈໍານວນເມືອງໃນທົ່ວປະເທດ ແລະ ກວມໄດ້ 90% ຂອງບັນດາບ້ານທັງໝົດ ໃນນັ້ນມີລະບົບເຄືອຂ່າຍ ໂທລະສັບມືຖື ທີ່ເປັນລະບົບ 2G,3G ແລະ ມີການລິເລີ່ມຕິດຕັ້ງລະບົບ 4G, ຕີລາຄາເປີເຊັນການກວມຂອງພື້ນທີ່ຂອງລະບົບສົ່ງສັນຍານໂທລະສັບມືຖືປະເພດຕ່າງໆ:

- ເຄືອຂ່າຍມືຖື 2G ກວມປະມານ 90% ຂອງບັນດາບ້ານທັງໝົດໃນທົ່ວປະເທດ
- ເຄືອຂ່າຍມືຖື 3G ກວມປະມານ 61% ຂອງບັນດາບ້ານທັງໝົດໃນທົ່ວປະເທດ
- ເຄືອຂ່າຍມືຖື 4G ກວມປະມານ 1,5% ຂອງບັນດາບ້ານທັງໝົດໃນທົ່ວປະເທດ

ລາຍລະອຽດຕາມຕາຕະລາງລຸ່ມນີ້:

**ຕາຕະລາງ7: ເຄືອຂ່າຍໂທລະຄົມມະນາຄົມ**

| ລ/ດ | ເນື້ອໃນ ເຄືອຂ່າຍ ໂທລະຄົມ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ສູນກາງ ໂທລະສັບຕັ້ງໂຕະ | ແຫ່ງ | 95 | 255 | 259 |
| 2 | ຈໍານວນສູນກາງ ໂທລະສັບມືຖື ( MSC) | ແຫ່ງ | | | 12 |
| 3 | ຈໍານວນສູນກາງ ໂທລະສັບມືຖື ( BSC) | ແຫ່ງ | | | 44 |
| 4 | ຈໍານວນເສົາ BTS ທັງໝົດທົ່ວປະເທດ | ແຫ່ງ | 7,154 | 6,527 | 6,776 |
| 5 | ຄວາມຍາວຂອງສາຍ Fiber Optic | ກິໂລແມັດ | 51,106 | 60,813 | 67,351 |
| 6 | ຈໍານວນແຂວງທີ່ມີສັນຍານ | ແຂວງ | 17 | 18 | 18 |
| 7 | ຈໍານວນເມືອງທີ່ມີສັນຍານ | ເມືອງ | 144 | 148 | 148 |
| 8 | ຈໍານວນບ້ານທີ່ມີສັນຍານ | ບ້ານ | 6,749 | 7,559 | 8,573 |

ໝາຍເຫດ:

- ຈໍານວນສູນກາງໂທລະສັບມືຖື MSC ແລະ BSC ແມ່ນຕົວຊີ້ວັດໃໝ່ທີ່ສັງລວມເຂົ້າໃນ ປີ 2015.
- ສາຍ Friber Optic ລວມທັງບໍລິສັດສະກາຍນໍາ

**ຮູບປະກອບ: ເສັ້ນກຣາຟ (Graph) ສະແດງໃຫ້ເຫັນການຂະຫຍາຍຕາໜ່າງສາຍໃຍແກ້ວ**




2. **ຄວາມອາດສາມາດຮອງຮັບໃນການໃຫ້ ບໍລິການ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ**

ຄວາມອາດສາມາດໃນການຮອງຮັບການບໍລິການແກ່ມວນຊົນດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີລາຍລະອຽດດັ່ງຕາຕະລາງຂໍ້ມູນ ສະຖິຕິ ລຸ່ມນີ້:

**ຕາຕະລາງ 8: ຄວາມອາດສາມາດຮອງຮັບ**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| **1** | ຄວາມອາດສາມາດໃນການໃຫ້ບໍລິການ ໂທລະສັບຕັ້ງໂຕະ PSTN | ເລກໝາຍ | 118,697 | 118,697 | 123,468 |
| 2 | ຄວາມອາດສາມາດໃຫ້ບໍລິການໂທລະສັບຕັ້ງໂຕະ 030 | ເລກໝາຍ | | | 5,850,000 |
| **3** | ຄວາມອາສາມາດໃຫ້ບໍລິການໂທລະສັບມືຖືທັງໝົດ | ເລກໝາຍ | 12,865,000 | 12,865,000 | 16,090,000 |

ໝາຍເຫດ: ຄວາມອາດສາມາດຂອງໂທລະສັບຕັ້ງໂຕະ 030 ປີ 2015 ແມ່ນຕົວຊີ້ວັດໃໝ່

| ລ/ດ | ເນື້ອໃນ INTERNET ອິນເຕີເນັດ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ອິນເຕີເນັດ ແບຮນວິດ ທີ່ອອກສູ່ຕ່າງປະເທດ | Mbit/s | 1,550 | 2,800 | 37,690 |
| 2 | ອິນເຕີເນັດ ແບຮນວິດ ທີ່ຢູ່ພາຍໃນ | Mbit/s | 800 | 900 | 11,000 |
| 3 | ການນຳໃຊ້ ອິນເຕີເນັດ ແບຮນວິດ ຈາກສາກົນ | Mbit/s | | | 21,457 |

ໝາຍເຫດ: ການນຳໃຊ້ອິນເຕີເນັດແບຮນວິດຈາກສາກົນ 2015 ແມ່ນຕົວຊີ້ວັດໃໝ່.

### 3. ບໍລິມາດການຊົມໃຊ້ ດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ

ບໍລິມາດ ການຊົມໃຊ້ການບໍລິການທາງດ້ານໂທລະຄົມມະນາຄົມ ແລະ ອິນເຕີເນັດ ມີການຂະຫຍາຍຕົວຢ່າງແຜ່ຫຼາຍ ແລະ ນັບມື້ນັບມີຄຸນນະພາບ, ໂດຍສະເພາະແມ່ນພວກເຮົາໄດ້ມີລະບຽບການໃນການຄຸ້ມຄອງທາງດ້ານ ເລກໝາຍ ແລະ ເຮັດໃຫ້ຈຳນວນການຊົມໃຊ້ຮັດກຸມຂຶ້ນເປັນຕາມລຳດັບ. ຊຶ່ງຈຳນວນຜູ້ຊົມໃຊ້ ໂທລະສັບ ທັງໝົດ ມືຖື ແລະ ຕັ້ງໂຕະ ທຽບໃສ່ປະຊາກອນ ໃນປະຈຸບັນປະມານ 85%, ໃນນັ້ນອັດຕາການຊົມໃຊ້ ອິນເຕີເນັດທີ່ມີການຈັບຈອງນຳໃຊ້ຖາວອນທຽບໃສ່ປະຊາກອນໃນປະຈຸບັນປະມານ 21%. ແລະ ອິນເຕີເນັດມືຖື 3G ປະມານ 30% ທຽບໃສ່ປະຊາກອນທົ່ວປະເທດ.

**ຕາຕະລາງ 9: ບໍລິມາດ ການຊົມໃຊ້**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | **ຈຳນວນຜູ້ລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະທັງໝົດ** | | 721,318 | 920,756 | 962,497 |
| **1** | ຈຳນວນ ຜູ້ລົງທະບຽນນຳໃຊ້ ໂທລະສັບຕັ້ງໂຕະແບບມີສາຍ ( PSTN) | ເລກໝາຍ | 721318 | 64,426 | 60,457 |
| **2** | ຈຳນວນ ຜູ້ລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະແບບບໍ່ມີສາຍ CDMA (030) | ເລກໝາຍ | | 856,330 | 902,040 |
| II | **ຈຳນວນ ລົງທະບຽນນຳໃຊ້ ໂທລະສັບ ມືຖື ທັງໝົດ** | | 4,481,395 | 4,336,184 | 3,704,769 |
| III | **ຈຳນວນ ຜູ້ລົງທະບຽນນຳໃຊ້ ອິນເຕີເນັດທັງໝົດ** | **ປະຕູ** | 1,907,593 | 2,036,471 | 2,642,693 |
| 1 | **ຈຳນວນ ຜູ້ລົງທະບຽນນຳໃຊ້ ອິນເຕີແບບມີສາຍ** | | 13,231 | 16,891 | 24,551 |
| – | ອິນເຕີເນັດ ລະບົບ ADSL | ປະຕູ | 12,022 | 15,923 | 14,285 |
| – | ອິນເຕີເນັດ ຜ່ານລະບົບ Dail up | ປະຕູ | 110 | 87 | – |
| – | ອິນເຕີເນັດ ຜ່ານສາຍເຊົ່າ (ສາຍໄຍແກ້ວ) Leaseline | ປະຕູ | 1099 | 881 | 1,441 |
| – | ອິນເຕີເນັດ ໃຊ້ສາຍເຊື່ອມເຂົ້າໃນເຮືອນ FTTH | ປະຕູ | | | 8,825 |
| 2 | **ຈຳນວນ ຜູ້ລົງທະບຽນນຳໃຊ້ ອິນເຕີແບບບໍ່ມີສາຍ** | ປະຕູ | 1,894,362 | 2,018,803 | 2,618,142 |
| – | ອິນເຕີເນັດ ແບບບໍ່ມີສາຍ WIRELESS | ປະຕູ | | 1,582 | - |
| – | ອິນເຕີເນັດ Wimax | ປະຕູ | | | 431 |
| – | ອິນເຕີເນັດ ຜ່ານຊິມ Aircard 3G (HSPA) | ປະຕູ | 125,382 | 119,846 | 680,835 |
| – | ອິນເຕີເນັດ ຜ່ານໂທລະສັບມືຖື 3G | ເລກໝາຍ | 1,768,980 | 1,897,375 | 1,936,876 |

**ໝາຍເຫດ:**

– ການລົງທະບຽນນຳໃຊ້ ໂທລະສັບມືຖື ທັງໝົດ ແມ່ນລວມຜູ້ຊົມໃຊ້ 3Gນຳ.

– ອິນເຕີເນັດຜ່ານລະບົບ Dial up ປີ 2015 ແມ່ນບໍ່ມີໃຫ້ບໍລິການ

**ບັນດາຕົວຊີ້ວັດລຸ່ມນີ້ແມ່ນຈັດເຂົ້າໃໝ່ໃນສົກປີ 2015.**

– ອິນເຕີເນັດ Wimax, ອິນເຕີເນັດໃຊ້ສາຍເຊື່ອເຂົ້າໃນເຮືອນ FTTH

### ການວິເຄາະອັດຕາການຂະຫຍາຍຕົວໃນແຕ່ລະປີ ຂອງ ໂທລະສັບຕັ້ງໂຕະ, ມືຖື, ແລະ ອິນເຕີເນັດ









4. **ບໍລິມາດ ການຊົມໃຊ້ ແຍກໄປຕາມແຂວງ**

ໂດຍອີງຕາມການຂະຫຍາຍໂຄງລ່າງພື້ນຖານ ຂອງໂທລະສັບ ຕັ້ງໂຕະ, ມືຖື ແລະ ອິນເຕີເນັດ ໄປຍັງສູນກາງ ແລະ ທ້ອງຖິ່ນຈຶ່ງກໍ່ໃຫ້ເກີດການຊົມໃຊ້ຕິດຕໍ່ສື່ສານ ລະຫວ່າງ ຊັ້ນຄົນໃນສັງຄົມຢ່າງທົ່ວເຖິງ ຊຶ່ງເຮັດໃຫ້ມີການຫຼຸດຜ່ອນຄວາມແຕກໂຕນ ( DIGITAL DIVIDE) ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ເຊັ່ນ: ຂັ້ນເມືອງ, ຂັ້ນແຂວງ ແລະ ນະຄອນຫລວງ.

**ຕາຕະລາງ 10: ບໍລິມາດ ຊົມໃຊ້ໂທລະສັບຕັ້ງໂຕະມີສາຍ ແຍກຕາມແຂວງ**

| ລ/ດ | ຊື່ແຂວງ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ເລກໝາຍ | 29,857 | 39,652 | 36,540 |
| 2 | ຜົ້ງສາລີ | ເລກໝາຍ | 1,665 | 504 | 522 |
| 3 | ຫຼວງນໍ້າທາ | ເລກໝາຍ | 1,264 | 683 | 689 |
| 4 | ອຸດົມໄຊ | ເລກໝາຍ | 2,368 | 1,089 | 1,043 |
| 5 | ບໍ່ແກ້ວ | ເລກໝາຍ | 1,153 | 624 | 605 |
| 6 | ຫຼວງພະບາງ | ເລກໝາຍ | 2,061 | 2,145 | 3,638 |
| 7 | ຫົວພັນ | ເລກໝາຍ | 2,219 | 991 | 959 |
| 8 | ໄຊຍະບູລີ | ເລກໝາຍ | 4,994 | 2,670 | 1,084 |
| 9 | ຊຽງຂວາງ | ເລກໝາຍ | 3,225 | 1,033 | 946 |
| 10 | ໄຊສົມບູນ | ເລກໝາຍ | | 62 | 79 |
| 11 | ວຽງຈັນ | ເລກໝາຍ | 2,551 | 1,995 | 1,985 |
| 12 | ບໍລິຄໍາໄຊ | ເລກໝາຍ | 1,960 | 1,409 | 1,338 |
| 13 | ຄໍາມ່ວນ | ເລກໝາຍ | 2,620 | 2,105 | 1,878 |
| 14 | ສະຫວັນນະເຂດ | ເລກໝາຍ | 4,679 | 4,396 | 4,245 |
| 15 | ສາລະວັນ | ເລກໝາຍ | 1,380 | 748 | 720 |
| 16 | ເຊກອງ | ເລກໝາຍ | 3,541 | 2,706 | 429 |
| 17 | ຈໍາປາສັກ | ເລກໝາຍ | 2,471 | 1,097 | 3,257 |
| 18 | ອັດຕະປື | ເລກໝາຍ | 1,215 | 517 | 499 |

ໝາຍເຫດ: ການລົງທະບຽນນໍາໃຊ້ຕັ້ງໂຕະ ແຂວງ ໄຊສົມບູນ ປີ 2013 ແມ່ນລວມໃນແຂວງວຽງຈັນ.

# ແຜ່ນທີ່ສະແດງບໍລິມາດການລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະມີສາຍແຍກໄປຕາມແຂວງ




ແຫຼ່ງຂໍ້ມູນໂດຍ: ພະແນກສະຖິຕິ, ກົມແຜນການແລະການຮ່ວມມື, ກະຊວງປທສ.   ໂທລະສັບ: 021-219902  ອີເມວ: dpc@mpt.gov.la

**ຕາຕະລາງ 11: ບໍລິມາດ ຊິມໃຊ້ໂທລະສັບ ຕັ້ງໂຕະບໍ່ມີສາຍ 030 ແຍກຕາມແຂວງ**

| ລ/ດ | ຊື່ແຂວງ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ເລກໝາຍ | 68,149 | 159,103 | 222,292 |
| 2 | ຜົ້ງສາລີ | ເລກໝາຍ | 665 | 65,478 | 24,915 |
| 3 | ຫຼວງນໍ້າທາ | ເລກໝາຍ | 743 | 81,680 | 23,438 |
| 4 | ອຸດົມໄຊ | ເລກໝາຍ | 850 | 54,811 | 36,937 |
| 5 | ບໍ່ແກ້ວ | ເລກໝາຍ | 809 | 40,161 | 19,640 |
| 6 | ຫຼວງພະບາງ | ເລກໝາຍ | 2,383 | 42,301 | 64,332 |
| 7 | ຫົວພັນ | ເລກໝາຍ | 1,427 | 55,812 | 41,971 |
| 8 | ໄຊຍະບູລີ | ເລກໝາຍ | 887 | 43,237 | 44,818 |
| 9 | ຊຽງຂວາງ | ເລກໝາຍ | 1,165 | 52,843 | 53,820 |
| 10 | ໄຊສົມບູນ | ເລກໝາຍ | | 5,507 | 6,428 |
| 11 | ວຽງຈັນ | ເລກໝາຍ | 1,880 | 51,106 | 69,188 |
| 12 | ບໍລິຄໍາໄຊ | ເລກໝາຍ | 1,283 | 43,962 | 47,262 |
| 13 | ຄໍາມ່ວນ | ເລກໝາຍ | 961 | 29,150 | 42,050 |
| 14 | ສະຫວັນນະເຂດ | ເລກໝາຍ | 1,726 | 26,501 | 74,038 |
| 15 | ສາລະວັນ | ເລກໝາຍ | 882 | 15,944 | 29,178 |
| 16 | ເຊກອງ | ເລກໝາຍ | 737 | 16,693 | 11,698 |
| 17 | ຈໍາປາສັກ | ເລກໝາຍ | 1,608 | 50,254 | 70,964 |
| 18 | ອັດຕະປື | ເລກໝາຍ | 740 | 21,787 | 15,249 |

ໝາຍເຫດ: ການລົງທະບຽນນໍາໃຊ້ໂທລະຕັ້ງໂຕະ 030, ແຂວງ ໄຊສົມບູນ ປີ 2013 ແມ່ນລວມໃນແຂວງວຽງຈັນ.

# ແຜ່ນທີ່ສະແດງບໍລິມາດການລົງທະບຽນນຳໃຊ້ໂທລະສັບຕັ້ງໂຕະແບບບໍ່ມີສາຍ(030 ) ແຍກໄປຕາມແຂວງ



ອະທິບາຍສັນຍາລັກ

| | |
|---|---|
| | 6428 |
| | 11698 |
| | 15249 |
| | 19640 |
| | 23438 |
| | 24915 |
| | 29178 |
| | 36937 |
| | 41971 |
| | 42050 |
| | 44818 |
| | 47262 |
| | 53820 |
| | 64332 |
| | 69188 |
| | 70964 |
| | 74038 |
| | 222292 |

❖ **ສົມທຽບ ການຊົມໃຊ້ ໂທລະສັບຕັ້ງໂຕະ ບໍ່ມີສາຍຂອງແຕ່ລະແຂວງ ປີ 2015**




**ຕາຕະລາງ 12: ບໍລິມາດ ຜູ້ລົງທະບຽນຊົມໃຊ້ ໂທລະສັບມືຖື ແຍກຕາມແຂວງ**

| ລ/ດ | ຊື່ແຂວງ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ເລກໝາຍ | 1,467,726 | 1,432,751 | 1,239,183 |
| 2 | ຜົ້ງສາລີ | ເລກໝາຍ | 71,244 | 316,217 | 69,588 |
| 3 | ຫຼວງນ້ຳທາ | ເລກໝາຍ | 97,492 | 382,143 | 106,524 |
| 4 | ອຸດົມໄຊ | ເລກໝາຍ | 123,798 | 173,717 | 108,735 |
| 5 | ບໍ່ແກ້ວ | ເລກໝາຍ | 86,288 | 120,895 | 84,840 |
| 6 | ຫຼວງພະບາງ | ເລກໝາຍ | 227,659 | 195,758 | 189,084 |
| 7 | ຫົວພັນ | ເລກໝາຍ | 129,146 | 143,597 | 119,626 |
| 8 | ໄຊຍະບູລີ | ເລກໝາຍ | 192,225 | 184,651 | 148,731 |
| 9 | ຊຽງຂວາງ | ເລກໝາຍ | 172,480 | 167,499 | 130,530 |
| 10 | ໄຊສົມບູນ | ເລກໝາຍ | | 1,258 | 1,079 |
| 11 | ວຽງຈັນ | ເລກໝາຍ | 202,539 | 178,962 | 152,973 |
| 12 | ບໍລິຄຳໄຊ | ເລກໝາຍ | 167,346 | 144,327 | 122,802 |
| 13 | ຄຳມ່ວນ | ເລກໝາຍ | 247,258 | 165,886 | 191,791 |
| 14 | ສະຫວັນນະເຂດ | ເລກໝາຍ | 539,292 | 256,777 | 427,586 |
| 15 | ສາລະວັນ | ເລກໝາຍ | 136,144 | 76,094 | 126,914 |
| 16 | ເຊກອງ | ເລກໝາຍ | 64,132 | 69,204 | 54,684 |
| 17 | ຈຳປາສັກ | ເລກໝາຍ | 424,513 | 252,982 | 355,077 |
| 18 | ອັດຕະປື | ເລກໝາຍ | 94,515 | 73,466 | 73,757 |

ໝາຍເຫດ:ການລົງທະບຽນນຳໃຊ້ໂທລະສັບມືຖື ແຂວງ ໄຊສົມບູນ ປີ 2013 ແມ່ນລວມໃນແຂວງວຽງຈັນ.

# ແຜ່ນທີ່ສະແດງບໍລິມາດການລົງທະບຽນນຳໃຊ້ໂທລະສັບມືຖື ແຍກໄປຕາມແຂວງ




ແຫຼ່ງຂໍ້ມູນໂດຍ: ພະແນກສະຖິຕິ, ກົມແຜນການແລະການຮ່ວມມື, ກະຊວງປທສ. ໂທລະສັບ: 021-219902 ອີເມວ: dpc@mpt.gov.la

❖ **ສົມທຽບຈຳນວນ ຂອງຜູ້ລົງທະບຽນຊົມໃຊ້ ໂທລະສັບມືຖື ໃນແຕ່ລະແຂວງ ປີ 2015.**




**ຕາຕະລາງ 13: ບໍລິມາດຜູ້ລົງທະບຽນນຳໃຊ້ ອິນເຕີເນັດ ແຍກຕາມແຂວງ .**

| ລ/ດ | ຊື່ແຂວງ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | ເລກໝາຍ | 72,906 | 59,370 | 253,467 |
| 2 | ຜົ້ງສາລີ | ເລກໝາຍ | 5,647 | 10,566 | 10,686 |
| 3 | ຫຼວງນໍ້າທາ | ເລກໝາຍ | 3,865 | 9,623 | 16,284 |
| 4 | ອຸດົມໄຊ | ເລກໝາຍ | 7,775 | 8,994 | 24,949 |
| 5 | ບໍ່ແກ້ວ | ເລກໝາຍ | 3,814 | 4,262 | 17,906 |
| 6 | ຫຼວງພະບາງ | ເລກໝາຍ | 8,204 | 6,841 | 40,636 |
| 7 | ຫົວພັນ | ເລກໝາຍ | 4,070 | 4,535 | 21,670 |
| 8 | ໄຊຍະບູລີ | ເລກໝາຍ | 5,051 | 5,105 | 22,603 |
| 9 | ຊຽງຂວາງ | ເລກໝາຍ | 4,769 | 4,986 | 24,748 |
| 10 | ໄຊສົມບູນ | ເລກໝາຍ | | 83 | 37 |
| 11 | ວຽງຈັນ | ເລກໝາຍ | 6,647 | 4,665 | 30,461 |
| 12 | ບໍລິຄຳໄຊ | ເລກໝາຍ | 5,697 | 4,432 | 34,394 |
| 13 | ຄຳມ່ວນ | ເລກໝາຍ | 4,499 | 2,791 | 35,762 |
| 14 | ສະຫວັນນະເຂດ | ເລກໝາຍ | 10,569 | 2,998 | 62,002 |
| 15 | ສາລະວັນ | ເລກໝາຍ | 1,908 | 1,622 | 18,239 |
| 16 | ເຊກອງ | ເລກໝາຍ | 2,428 | 2,703 | 9,511 |
| 17 | ຈຳປາສັກ | ເລກໝາຍ | 7,972 | 3,475 | 71,206 |
| 18 | ອັດຕະປື | ເລກໝາຍ | 1,479 | 1,313 | 10,998 |

ໝາຍເຫດ:

- ຈຳນວນຕົວເລກທີ່ສະແດງຂ້າງເທິງນີ້ ແມ່ນບໍ່ໄດ້ລວມ ມືຖື 3G
- ການລົງທະບຽນນຳໃຊ້ອິນເຕີເນັດ ແຂວງ ໄຊສົມບູນ ປີ 2013 ແມ່ນລວມໃນແຂວງ ວຽງຈັນ

# ແຜ່ນທີ່ສະແດງບໍລິມາດການລົງທະບຽນນຳໃຊ້ອິນເຕີເນັດແຍກໄປຕາມແຂວງ




ແຫຼ່ງຂໍ້ມູນໂດຍ: ພະແນກສະຖິຕິ, ກົມແຜນການແລະການຮ່ວມມື, ກະຊວງປທສ. ໂທລະສັບ: 021-219902 ອີເມວ: dpc@mpt.gov.la

❖ **ສົມທຽບ ຈຳນວນ ຜູ້ລົງທະບຽນຊົມໃຊ້ ອິນເຕີເນັດໃນ ແຕ່ລະແຂວງ ປີ 2015.**




## 5. ບໍລິມາດການຜະລິດດ້ານໂທລະຄົມມະນາຄົມ.

ບໍລິມາດການຜະລິດ ທາງດ້ານໂທລະຄົມ ຂອງໂທລະສັບ ຕັ້ງໂຕະ, ມືຖື ແລະ ອິນເຕີເນັດທີ່ຜະລິດພາຍໃນປີ ແຍກຕາມບໍລິມາດຜົນຜະລິດໂທລະຄົມ (ນາທີ) ທັງໝົດທັງພາຍໃນ ແລະ ຕ່າງປະເທດ ດັ່ງຕາຕະລາງຂໍ້ມູນລຸ່ມນີ້.

**ຕາຕະລາງ14: ບໍລິມາດການຜະລິດທາງດ້ານໂທລະຄົມ**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| I | **ບໍລິມາດການໂທຂອງໂທລະສັບຕັ້ງໂຕະ** | | | | |
| **1** | ບໍລິມາດການຜະລິດຂອງໂທລະສັບ ຕັ້ງໂຕະ ໂທ ຫາ ໂທລະສັບຕັ້ງໂຕະ | ພັນນາທີ | 13,486 | 30,563 | 94,662 |
| **2** | ບໍລິມາດການຜະລິດຂອງໂທລະສັບ ຕັ້ງໂຕະ ໂທ ຫາມືຖື | ພັນນາທີ | 63,240 | 115,324 | 190,968 |
| **3** | ບໍລິມາດການຜະລິດ ໂທລະສັບຕັ້ງໂຕະ ໂທອອກສູ່ສາກົນ | ພັນນາທີ | 4,480 | 3,832 | 8,411 |
| **4** | ບໍລິມາດການຜະລິດຂອງໂທລະສັບ ຕັ້ງໂຕະທີ່ໂທຈາກຕ່າງປະເທດ, | ພັນນາທີ | 263 | 2,789 | 1,856 |
| II | **ບໍລິມາດການໂທຂອງໂທລະສັບມືຖື** | | | | |
| 1 | ບໍລິມາດການຜະລິດຂອງໂທລະສັບ ມືຖື ພາຍໃນປະເທດ, | ພັນນາທີ | 1159,655 | 1006,668 | 1,818,432 |
| 2 | ບໍລິມາດການຜະລິດຂອງໂທລະສັບ ມືຖືໂທຫາ ຕັ້ງໂຕະ, | ພັນນາທີ | 71,658 | 106,883 | 168,971 |
| 3 | ບໍລິມາດການຜະລິດຂອງໂທລະສັບ ມືຖື ໂທອອກສູ່ຕ່າງປະເທດ, | ພັນນາທີ | 48,580 | 132,925 | 105,576 |
| 4 | ບໍລິມາດການຜະລິດຂອງໂທລະສັບ ມືຖື ຮັບຈາກຕ່າງປະເທດ | ພັນນາທີ | 423,138 | 230,819 | 170,467 |
| 5 | ສົ່ງຂໍ້ຄວາມ | ພັນຄັ້ງ | 2088,625 | 476,413 | 290,822 |
| 6 | ສົ່ງຂໍ້ຄວາມອອກສູ່ຕ່າງປະເທດ | ພັນຄັ້ງ | 4,334 | 14,842 | 3,329 |

ແຫຼ່ງຂໍ້ມູນ: ຂໍ້ມູນຈາກ 4 ບໍລິສັດໂທລະຄົມມະນາຄົມ.

❖ **ສົມທຽບບໍລິມາດການຜະລິດລະຂອງໂທລະສັບຕັ້ງໂຕະ ແລະ ມືຖື ປີ 2013-2015**







6. **ສະຖິຕິດ້ານການເຊື່ອມຕໍ່ (ບໍລິມາດທີ່ ສູນອິນເຕີເນັດແຫ່ງຊາດ ຕິດຕາມ ແລະ ຄຸ້ມຄອງ) .**

ບໍລິມາດທີ່ທາງ ສູນອິນເຕີເນັດ ແຫ່ງຊາດ ຂອງພວກເຮົາຕິດຕາມ ແລະ ຄຸ້ມຄອງການຜະລິດຂອງຫົວໜ່ວຍວິສາຫະກິດປະຈຸບັນເຊັ່ນ: ຈຳນວນບໍລິມາດ ອິນເຕີເນັດ (IP), ຈຳນວນ ບໍລິມາດ ໂທລະສັບພາຍໃນ (VOICE), ຈຳນວນ ບໍລິມາດຂໍ້ຄວາມສັ້ນ (SMS), ນອກນັ້ນສູນອິນເຕີເນັດແຫ່ງຊາດ ກໍ່ຍັງຄຸ້ມຄອງຈຳນວນ ແລະ ການລົງທະບຽນນຳໃຊ້ຊື່ອິນເຕີເນັດ ຂັ້ນສອງ ແລະ ຂັ້ນສາມ ທີ່ນອນຢູ່ພາຍໃຕ້ລະຫັດຊື່ ອິນເຕີເນັດ ແຫ່ງຊາດ .LA.

**ຕາຕະລາງ15: ຈຳນວນບໍລິມາດຜ່ານສູນອິນເຕີເນັດແຫ່ງຊາດ**

| ລ/ດ | ຊື່ຂອງຕົວຊີ້ບອກ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | **ຈ/ນ ບໍລິມາດທັງໝົດຂອງ ສອຊ** | | | | |
| – | ຈ/ນ ບໍລິມາດຂອງ ອິນເຕີເນັດ IP (Mb) | Mb | 2,415 | 2,130 | 1,365 |
| – | ຈ/ນ ບໍລິມາດຂອງ ໂທລະສັບພາຍໃນ VOICE | ນາທີ | 769,371,854 | 786,274,118 | 974,650,451 |
| – | ຈ/ນ ບໍລິມາດຂອງ ຂໍ້ຄວາມສັ້ນ SMS | ຄັ້ງ | 112,142,253 | 89,471,454 | 51,020,929 |
| 2 | **ຈຳນວນຜູ້ລົງທະບຽນລະຫັດຊື່ອິນເຕີເນັດ**.LA | | | | |
| – | ຈ/ນ ລະຫັດຊື່ອິນເຕີເນັດຂັ້ນສອງ ( .LA ) ທັງໝົດທີ່ Active ໃນລະບົບ | ໂດເມນ | 32,277 | 38,063 | 40,503 |
| – | ຈ/ນ ລະຫັດຊື່ອິນເຕີເນັດຂັ້ນສາມທັງໝົດທີ່ Active ໃນລະບົບ | ໂດເມນ | 543 | 623 | 733 |
| – | ຈຳນວນລະຫັດຊື່ອິນເຕີເນັດທີ່ໝົດອາຍຸໃຊ້ບໍລິການ | ໂດເມນ | * | * | 3 |
| – | ຈຳນວນລະຫັດຊື່ອິນເຕີເນັດທີ່ຕໍ່ອາຍຸໃຊ້ບໍລິການ | ໂດເມນ | * | * | 15 |
| – | ຈຳນວນລະຫັດອິນເຕີເນັດຂັ້ນສາມທີ່ຈົດໃໝ່ | ໂດເມນ | * | * | 113 |

ແຫຼ່ງຂໍ້ມູນ: ສູນອິນເຕີເນັດແຫ່ງຊາດ,ກະຊວງ ປທສ.

ໝາຍເຫດ:

ຈຳນວນຕົວຊີ້ບອກລຸ່ມນີ້ ແມ່ນເພີ່ມເຂົ້າໃໝ່:

(*)ຈຳນວນລະຫັດຊື່ອິນເຕີເນັດທີ່ໝົດອາຍຸໃຊ້ບໍລິການ

(*)ຈຳນວນລະຫັດຊື່ອິນເຕີເນັດທີ່ຕໍ່ອາຍຸໃຊ້ບໍລິການ

(*)ຈຳນວນລະຫັດອິນເຕີເນັດຂັ້ນສາມທີ່ຈົດໃໝ່

## 7. ດ້ານເຄືອຂ່າຍບໍລິຫານລັດດ້ວຍເອເລັກໂຕຣນິກ.

ປະຈຸບັນວຽກງານບໍລິຫານລັດດ້ວຍເອເລັກໂຕນິກ ເປັນວຽກທີ່ສຳຄັນ ແລະ ເປັນພາກສ່ວນຊ່ວຍຊຸກຍູ້ວຽກງານ ບໍລິຫານ ແລະ ບໍລິການຂອງລັດທັນເປັນທັນສະໄໝ, ບັນດາຕົວຊີ້ບອກທີ່ສຳຄັນໃນການບອກລະດັບຄາດໝາຍຂອງການຂະຫຍາຍຕົວຂອງວຽກງານ ບໍລິຫານລັດດ້ວຍເອເລັກໂຕນິກ ກໍ່ມີຂໍ້ມູນທີ່ໜ້າສຶກສາ ເຊັ່ນ: ສະຖິຕິຈຳນວນຜູ້ໃຊ້ລະບົບ, ສະຖິຕິ ຜູ້ໃຊ້ອີເມວ, ສະຖິຕິ ການດາວໂຫຼດ ຟອນ ພາສາລາວ , ລາວຄີບອດ ແລະ ອື່ນໆ ດັ່ງລຸ່ມນີ້:

**ຕາຕະລາງ16: ເຄືອຂ່າຍບໍລິຫານລັດດ້ວຍເອເລັກໂຕຣນິກ.**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | **ສະຖິຕິດ້ານເຄືອຂ່າຍ** | | | | |
| - | ສາຍໄຍແກ້ວ (Fiber Optic) ເຊື່ອມໂຍງບັນດາຫ້ອງການລັດຕ່າງໆໃນຂັ້ນສູນກາງ (ສາຍສິ່ງແຫ່ງຊາດ) | ຫ້ອງການ | 44 | 22 | 2 |
| - | ຕິດຕັ້ງການເຊື່ອມຕໍ່ສັນຍານ Wimax ຢູ່ສູນກາງ | ສູນກາງ | 200 | ລໍຖ້າປັບປຸງ | ລໍຖ້າປັບປຸງ |
| - | ຕິດຕັ້ງລະບົບສົ່ງສັນຍານ Wimax 3 ແຂວງໃຫ້10 ພະແນກແຂວງ | ຫ້ອງການ | 30 | ລໍຖ້າປັບປຸງ | ລໍຖ້າປັບປຸງ |
| 2 | **ສະຖິຕິ ການນຳໃຊ້ລະບົບກອງປະຊຸມທາງໄກ** | | | | |
| - | ຕິດຕັ້ງລະບົບກອງປະຊຸມທາງໄກໃຫ້ບັນດາຫ້ອງການລັດທົ່ວປະເທດ | ຫ້ອງການ | 38 | ລໍຖ້າປັບປຸງ | ລໍຖ້າປັບປຸງ |
| - | ຕິດຕັ້ງລະບົບກອງປະຊຸມທາງໄກໃຫ້ບັນດາຫ້ອງການລັດຢູ່ສູນກາງ | ຫ້ອງການ | 22 | ລໍຖ້າປັບປຸງ | ລໍຖ້າປັບປຸງ |

ແຫຼ່ງຂໍ້ມູນ: ສູນບໍລິຫານລັດດ້ວຍອີເລັກໂຕຣນິກ,ກະຊວງ ປທສ.

<u>ໝາຍເຫດ:</u> ເຄືອຂ່າຍ (Fiber Oftic) ບັນດາຫ້ອງການລັດຕ່າງໆໃນຂັ້ນສູນກາງ ໂດຍນໍາໃຊ້ສາຍສົ່ງແຫ່ງຊາດໃນປີ 2013 ໃຊ້ໄດ້ 44 ຫ້ອງການ ປີ 2015 ເຫລືອແຕ່ 2 ຫ້ອງການທີ່ນໍາໃຊ້ໄດ້.

**ຕາຕະລາງ17: ຈານວນດາວໂຫລດ ແລະ ຊົມໃຊ້**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | **ຈຳນວນດາວໂຫຼດ** | | | | |
| – | ຟອນເພັດຊະລາດ PhetsarathOT.ttf (ທຸກລະບົບປະຕິບັດການ) | ຄັ້ງ | * | 20,068 | 36,193 |
| – | ຟອນເພັດຊະລາດ ສຳລັບເວບໄຊ (ທຸກລະບົບປະຕິບັດການ) | ຄັ້ງ | * | | 4,102 |
| – | ຟອນເພັດຊະລາດ ສຳລັບແອນດອຍ 4.1 ລົງມາ (ລະບົບປະຕິບັດການ ANDROID) | ຄັ້ງ | * | 2,893 | 1,924 |
| – | ຟອນເພັດຊະລາດ ສຳລັບແອນດອຍ 4.2 ຂຶ້ນໄປ (ລະບົບປະຕິບັດການ ANDROID) | ຄັ້ງ | * | 1,195 | 2,707 |
| – | ຟອນເພັດຊະລາດ ສຳລັບ ໄອໂອເອສ 7, 8 (ລະບົບປະຕິບັດການ iOS7, iOS8) | ຄັ້ງ | * | 889 | 2,506 |
| – | ແປ້ນພິມພາສາລາວ ສຳລັບ ແອນດອຍ ໃນຮູບແບບ ຕິດຕັ້ງ (ລະບົບປະຕິບັດການ ANDROID) | ຄັ້ງ | * | 1,213 | 1,391 |
| – | ແປ້ນພິມພາສາລາວ ສຳລັບ ຄອມພິວເຕີ (Allລະບົບປະຕິບັດການ Windows) | ຄັ້ງ | * | 1,033 | 3,254 |
| – | ໂປຣແກມປ່ຽນຟອນ ສຳລັບ ຟາຍ.txt (ລະບົບປະຕິບັດການ Windows (Vista ຕິດຕັ້ງ.net3.5 ຂຶ້ນໄປ) | ຄັ້ງ | 3,166 | 2,960 | 9,262 |
| – | ໂປຣແກມກ່າຍຕົວໜັງສືຈາກຮູບພາບ LAO OCR (ລະບົບປະຕິບັດການ Windows XP, Vista, SEVEN) | ຄັ້ງ | 2,075 | 2,785 | 6,732 |
| 2 | **ລະບົບ ສົ່ງຂໍ້ຄວາມ,ພາບ,ສຽງ** RTX | | | | |
| – | ສ້າງລະຫັດຊື່ຜູ້ນຳໃຊ້ ລະບົບສົ່ງຂໍ້ຄວາມ,ພາບ,ສຽງ,ຜ່ານເອເລັກໂຕຣນິກ (RTX) | ຄົນ | 1,651 | 1,729 | 1838 |
| 3 | **ລະບົບ ອີເມວ** mpt.gov.la | | | | |
| – | ຈຳນວນຜູ້ໃຊ້ເມວ ພາຍໃຕ້ໂດເມນ mpt.gov.la | ຄົນ | * | 815 | 897 |

ແຫຼ່ງຂໍ້ມູນ: ສູນບໍລິຫານລັດດ້ວຍອີເລັກໂຕຣນິກ, ກະຊວງ ປທສ.

ໝາຍເຫດ: (*) ຕົວຊີ້ວັດດັ່ງກ່າວແມ່ນເລີ່ມຈັດເກັບຂໍ້ມູນ 2014 ເປັນຕົ້ນມາ

## 8. ສະຖິຕິທີ່ກ່ຽວຂ້ອງກັບວຽກງານ ໄອຊີທີ .

ເພື່ອຢັ້ງຢືນເຖິງການຂະຫຍາຍຕົວທາງດ້ານ ໄອຊີທີ ພວກເຮົາກໍ່ໄດ້ມີການເກັບກຳຂໍ້ມູນ ຂອງບໍລິສັດ ແລະ ຫ້າງຮ້ານທີ່ເຮັດທຸລະກິດດ້ານ ໄອຊີທີ ໃນທົ່ວປະເທດ ເຊັ່ນ: ຈຳນວນ ບໍລິສັດ ທີ່ຂຶ້ນທະບຽນ ທີ່ເຮັດທຸລະກິດດ້ານ ໄອທີ, ຮ້ານຂາຍເຄື່ອງອຸປະກອນເອເລັກໂຕຣນິກ ແລະ ຮ້ານອິນເຕີເນັດ ຄາເຟ.

**ຕາຕະລາງ18: ຈານວນບໍລິສັດ ແລະ ຮ້ານທີ່ເຮັດທຸລະກິດດ້ານ ໄອຊີທີໃນທົ່ວປະເທດ.**

| **ລ/ດ** | **ຕົວຊີ້ບອກ** | **ຫົວ ໜ່ວຍ** | 2015 |
|---|---|---|---|
| 1 | ບໍລິການ ເຊື່ອມຕໍ່ອິນເຕີເນັດ IPS (ທີ່ອອກທະບຽນໃຫ້) | ບໍລິສັດ | 2 |
| 2 | ຮ້ານບໍລິການ ອິນເຕີເນັດຄາເຟ (ທີ່ອອກທະບຽນໃຫ້) | ຮ້ານ | 421 |
| 3 | ບໍລິການ ເຕັກໂນໂລຊີຂໍ້ມູນຂ່າວສານ (ທີ່ອອກທະບຽນໃຫ້) | ບໍລິສັດ | 307 |
| 4 | ບໍລິການ ຂໍ້ມູນຂ່າວສານ ໃນຮູບແບບ ເອເລັກໂຕຣນິກ (Digital Contents) | ຮ້ານ | 4 |
| 5 | ບໍລິການ ທີ່ປຶກສາທາງດ້ານ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ | ຮ້ານ | 3 |
| 6 | ບໍລິການ ຝຶກອົບຮົມທາງດ້ານ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ | ຮ້ານ | 3 |
| 7 | ບໍລິການຄວາມປອດໄພ ທາງດ້ານ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ | ບໍລິສັດ | 0 |
| 8 | ຜະລິດອຸປະກອນ ແລະ ຊີ້ນສ່ວນເອເລັກໂຕຣນິກ | ບໍລິສັດ | 0 |
| **9** | ການສ້າງ ແລະ ບໍລິການ ຊອບແວ | ບໍລິສັດ | 17 |
| **10** | ການນຳເຂົ້າ ແລະ ຈຳໜ່າຍ ອຸປະກອນ ໄອທີ | ຮ້ານ | 234 |
| **11** | ການບໍລິການ ຕິດຕັ້ງ, ສ້ອມແປງດ້ານ ເຕັກໂນໂລຊີສື່ສານ ແລະ ຂໍ້ມູນ | ຮ້ານ | 99 |

ແຫຼ່ງຂໍ້ມູນ: ກົມເຕັກໂນໂລຊີ ຂໍ້ມູນ-ຂ່າວສານ , ກະຊວງ ປທສ.

ໝາຍເຫດ: ຈຳນວນຕົວຊີ້ວັດດັ່ງກ່າວແມ່ນໄດ້ເລີ່ມຕົ້ນເກັບ ປີ 2015.

# ສະຖິຕິດ້ານການລົງທຶນ
# ໃນຂະແໜງ ການ ປທສ

## IV. ສະຖິຕິ ການລົງທຶນໃນຂະແໜງ ປທສ

ຂະແໜງ ປທສ ໃນຂັ້ນມະຫາພາກ ແລະ ຈຸລະພາກໄດ້ມີການລົງທຶນໃສ່ການພັດທະນາຂະແໜງການ ເຊັ່ນ: ການຂະຫຍາຍລະບົບເຄືອຂ່າຍ ສ້າງຄວາມເຂັ້ມແຂງທາງດ້ານວິຊາການ ແລະ ເຕັກນິກໃຫ້ແກ່ພະນັກງານບຸກຄະລາກອນຕາມສະພາບການພັດທະນາໃນຂົງເຂດພາກພື້ນ ແລະ ສາກົນ.

**ຕາຕະລາງ19: ການລົງທຶນຂອງມະຫາພາກ**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2012-13 | 2013-14 | 2014-15 |
|---|---|---|---|---|---|
| I | **ສະຖິຕິ ການຂຶ້ນແຜນໂຄງການລາຍຮັບວິຊາການ** | | | | |
| 1 | ໂຄງການລາຍຮັບວິຊາການຂັ້ນສູງກາງ | ໂຄງການ | 4 | 8 | 3 |
| - | ມູນຄ່າທີ່ໄດ້ລົງທຶນທັງໝົດພາຍໃນສົກປີ | ຕື້ກີບ | 26,50 | 24,94 | 16,17 |
| II | **ສະຖິຕິ ໂຄງການ ການລົງທຶນຂອງລັດ** | | | | |
| 1 | ໂຄງການງົບປະມານຂອງລັດຂັ້ນສູງກາງ | ໂຄງການ | 4 | 9 | 13 |
| - | ມູນຄ່າໂຄງການທັງໝົດປະຈຳສົກ | ຕື້ກີບ | 0,240 | 4,2 | 5 |
| III | **ໂຄງການທີ່ເປັນທຶນຊ່ວຍເຫຼືອຫຼ້າ (ODA) ທັງໝົດ** | | | | |
| 1 | ໂຄງການຊ່ວຍເຫຼືອຈາກພາຍນອກ(ODA) ຂັ້ນສູງກາງ | ໂຄງການ | 1 | 2 | |
| - | ມູນຄ່າໂຄງການທັງໝົດປະຈຳສົກ | ໂດລາ | 474,399 | 2,691,270 | |
| IV | **ໂຄງການທີ່ເປັນທຶນຊ່ວຍເຫຼືອ (ODA) ແລະ ທຶນສົມທົບ** | | | | |
| 1 | ໂຄງການຊ່ວຍເຫຼືອຈາກພາຍນອກ(ODA) ຂັ້ນສູງກາງ | ໂຄງການ | | | |
| - | ມູນຄ່າໂຄງການທັງໝົດປະຈຳສົກ | ລ້ານກີບ | | | |
| - | ມູນຄ່າທຶນສົມທົບຈາກເບື້ອງລັດ | ລ້ານກີບ | | | |
| 2 | ໂຄງການຊ່ວຍເຫຼືອຈາກພາຍນອກ(ODA ຂັ້ນທ້ອງຖິ່ນ | ໂຄງການ | | | |
| - | ມູນຄ່າໂຄງການທັງໝົດປະຈຳສົກ | ລ້ານກີບ | | | |
| - | ມູນຄ່າທຶນສົມທົບຈາກເບື້ອງລັດ | ລ້ານກີບ | | | |

ແຫຼ່ງຂໍ້ມູນ: ກົມການເງິນ & ກົມແຜນການ ແລະ ການຮ່ວມມື.

**ຕາຕະລາງ20: ການລົງທຶນຂອງຈຸລະພາກ.**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| 1 | ການລົງທຶນປະຈໍາປີ ໃສ່ຂະແໜງການ ໂທລະຄົມມະນາຄົມ | US$ | 11,300,385 | 42,989,266 | 49,290,021 |
| 2 | ການລົງທຶນປະຈໍາປີ ໃສ່ ພາກສ່ວນໂທລະສັບຕັ້ງໂຕະ | US$ | 288,501 | 2,417,601 | 300,000 |
| 3 | ຈໍານວນລົງທຶນປະຈໍາປີໃສ່ອິນເຕີແນັດບອດແບຣນແບບມີສາຍ | US$ | | | 4,906,690 |
| 4 | ການລົງທຶນປະຈໍາປີໃສ່ ພາກສ່ວນມືຖື | US$ | 11,011,884 | 40,571,665 | 44,083,331 |

ແຫຼ່ງຂໍ້ມູນ: 4 ບໍລິສັດຜູ້ໃຫ້ບໍລິການດ້ານໂທລະຄົມ

# ສະຖິຕິດ້ານບຸກຄະລາກອນ

## V. ສະຖິຕິ ດ້ານບຸກຄະລາກອນຂັ້ນສູນກາງ ທີ່ຂຶ້ນກັບ ກະຊວງ ປທສ.

ກະຊວງ ປທສ ມີຈຳນວນບຸກຄະລາກອນທີ່ຈັດຕັ້ງຕາມຕຳແໜ່ງງານ ແລະ ຄວາມຮັບຜິດຊອບ ຊຶ່ງແຍກໄປຕາມປະເພດ, ລະດັບການສຶກສາ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ.

**ຕາຕະລາງ21: ຈຳນວນ ບຸກຄະລາກອນ ຂັ້ນສູນກາງທີ່ແຍກໄປຕາມປະເພດ.**

| ລ/ດ | ເນື້ອໃນ ( ຫົວໜ່ວຍ ຄົນ ) | 2013 | | 2014 | | 2015 | |
|---|---|---|---|---|---|---|---|
| | | ລ | ຍ | ລ | ຍ | ລ | ຍ |
| 1 | **ຈຳນວນ ລັດຖະກອນ ທັງໝົດທີ່ຢູ່ໃນ ກະຊວງ ປທສ** | | | | | | |
| – | ພະນັກງານ ລັດຖະກອນ ສົມບູນ | 278 | 115 | 394 | 148 | 455 | 169 |
| – | ພະນັກງານ ດຖະກອນ 95 % | 106 | 33 | 70 | 23 | 41 | 17 |
| | **ຍອດລວມ** | 384 | 148 | 464 | 171 | 496 | 186 |
| 2 | **ລັດຖະກອນ ທີ່ໄປຍົກລະດັບ (ຮຽນຕໍ່)** | | | | | | |
| – | ພະນັກງານ ໄປຮຽນຕໍ່ພາຍໃນປະເທດ ( ຮັບເງິນເດືອນ 90%) | | | | | | |
| – | ພະນັກງານ ໄປຮຽນຕໍ່ຕ່າງປະເທດ (ຮັບເງິນເດືອນ 70%) | | | | | | |
| – | ພະນັກງານ ໄປຮຽນຕໍ່ຕ່າງປະເທດ (ຮັບເງິນເດືອນ 50%) | | | | | | |
| – | ພະນັກງານ ໄປຮຽນຕໍ່ຕ່າງປະເທດ (ຫວຽດນາມ) (ຮັບເງິນເດືອນ 100%) | 1 | 0 | 2 | 0 | | |
| – | ພະນັກງານ ໄປຮຽນຕໍ່ຕ່າງປະເທດ (ຫວຽດນາມ) (ຮັບເງິນເດືອນ 90%) | 5 | 0 | 7 | 1 | 5 | 1 |
| | **ຍອດລວມ** | 6 | 0 | 9 | 1 | 5 | 1 |
| 3 | **ລັດຖະກອນ ທັງໝົດໃນກະຊວງ ປທສ ແຍກຕາມປະເພດພະນັກງານ** | | | | | | |
| – | ພະນັກງານປະເພດ 1 | | | | | | |
| – | ພະນັກງານປະເພດ 2 | | | 12 | 0 | 13 | 0 |
| – | ພະນັກງານປະເພດ 3 | | | 20 | 2 | 21 | 2 |
| – | ພະນັກງານປະເພດ 4 | | | 44 | 16 | 45 | 14 |
| – | ພະນັກງານປະເພດ 5 | | | 38 | 15 | 43 | 21 |
| – | ພະນັກງານປະເພດ 6 | | | 26 | 10 | 0 | 0 |
| – | ພະນັກງານປະເພດ 7 | | | | | | |
| – | ພະນັກງານປະເພດ 8 | | | 324 | 128 | 374 | 149 |
| | **ຍອດລວມ** | 0 | 0 | 464 | 171 | 496 | 186 |

**ຕາຕະລາງ: 22 ລັດຖະກອນ ແຍກຕາມລະດັບການສຶກສາ**

| ລ/ດ | ເນື້ອໃນ (ຫົວໜ່ວຍ ຄົນ) | 2013 | | 2014 | | 2015 | |
|---|---|---|---|---|---|---|---|
| | | ລ | ຍ | ລ | ຍ | ລ | ຍ |
| 1 | **ລັດຖະກອນ ແຍກຕາມລະດັບການສຶກສາ** | | | | | | |
| – | ຊັ້ນຕົ້ນ | | | 2 | 1 | 2 | 1 |
| – | ຊັ້ນກາງ | | | 8 | 2 | 7 | 2 |
| – | ຊັ້ນສູງ | | | 82 | 34 | 79 | 31 |
| – | ປະລິນຍາຕີ | | | 314 | 18 | 335 | 128 |
| – | ປະລິນຍາໂທ | | | 53 | 15 | 67 | 23 |
| – | ປະລິນຍາເອກ | | | 5 | 1 | 6 | 1 |
| | **ຍອດລວມ** | | | 464 | 71 | 496 | 186 |
| 2 | **ລັດຖະກອນ ຈົບສາຂາວິຊາທິດສະດີການເມືອງ - ການປົກຄອງ** | | | | | | |
| – | ບໍາລຸງທິດສະດີການເມືອງ 45 ວັນ | 29 | 10 | 20 | 12 | 0 | |
| – | ຊັ້ນຕົ້ນ | | | | | 0 | |
| – | ຊັ້ນກາງ | | | | | 0 | |
| – | ຊັ້ນສູງ | 4 | 0 | 6 | 2 | 2 | |
| – | ປະລິນຍາຕີ | | | 1 | | 1 | 1 |
| – | ປະລິນຍາໂທ | | | 2 | | | |
| – | ປະລິນຍາເອກ | | | | | | |
| | **ຍອດລວມ** | 33 | 10 | 29 | 14 | 3 | 1 |
| 3 | **ຈໍານວນພະນັກງານ ທີ່ແຍກໄປຕາມເກນອາຍຸ** | | | | | | |
| – | ອາຍຸຕໍ່າກ່ວາ 20 ປີ | | | | | 51 | 23 |
| | ອາຍຸ 20 ຫາ 25 ປີ | | | 110 | 42 | 209 | 81 |
| – | ອາຍຸ 26 ຫາ 30 ປີ | | | 183 | 80 | 123 | 54 |
| – | ອາຍຸ 31 ຫາ 35 ປີ | | | 87 | 35 | 47 | 17 |
| – | ອາຍຸ 36 ຫາ 40 ປີ | | | 27 | 5 | 18 | 4 |
| – | ອາຍຸ 41 ຫາ 45 ປີ | | | 17 | 5 | 14 | 3 |
| – | ອາຍຸ 46 ຫາ 50 ປີ | | | 15 | 4 | 14 | 4 |
| – | ອາຍຸ 51 ຫາ 55 ປີ | | | 10 | 0 | 11 | 0 |
| – | ອາຍຸ 56 ຫາ 60 ປີ | | | 13 | 0 | 9 | 0 |
| – | ອາຍຸ 60 ປີ ຂື້ນໄປ | | | 2 | 0 | | |
| | **ຍອດລວມ** | | | 464 | 171 | 496 | 186 |

**ຕາຕາລາງ23 : ຈຳນວນນັກສຶກສາໃນຂະແໜງ ປທສ.**

| ລ/ດ | ເນື້ອໃນ (ຫົວໜ່ວຍ ຄົນ) | 2013 | | 2014 | | 2015 | |
|---|---|---|---|---|---|---|---|
| | | ລ | ຍ | ລ | ຍ | ລ | ຍ |
| 1 | **ນັກສຶກສາທັງໝົດໃນ ຂະແໜງ ປທສ** | | | | | | |
| – | ຊັ້ນກາງ | 100 | 0 | 100 | 0 | | |
| – | ຊັ້ນສູງ | 323 | 141 | 277 | 129 | 655 | 304 |
| – | ປະລິນຍາຕີ | 183 | 78 | 183 | 78 | 12 | 4 |
| 2 | **ນັກສຶກສາ ທີ່ໄດ້ຮັບປະກາສະນິຍະບັດ** | | | | | | |
| – | ຊັ້ນກາງ | 0 | 0 | 100 | 0 | | |
| – | ຊັ້ນສູງ | 46 | 12 | 0 | 0 | 102 | 48 |
| – | ປະລິນຍາຕີ | 74 | 29 | 123 | 44 | 107 | 49 |

ແຫຼ່ງຂໍ້ມູນ: ສະຖາບັນໄປສະນີ,ໂທລະຄົມມະນາຄົມ ການສື່ສານ.

**ຕາຕາລາງ24: ຈຳນວນບຸກຄະລາກອນ ລັດວິສາຫາກິດ ໄປສະນີ ແລະ ໂທລະຄົມ.**

| ລ/ດ | ເນື້ອໃນ | ຫົວໜ່ວຍ | 2013 | 2014 | 2015 |
|---|---|---|---|---|---|
| **1** | **ບຸກຄະລາກອນຂະແໜງການໄປສະນີ** | | | | |
| **-** | ພະນັກງານ ສົມບູນທັງໝົດ | ຄົນ | 643 | 646 | 615 |
| **-** | ພະນັກງານ ສົມບູນ(ຍິງ) | ຄົນ | 302 | 292 | 293 |
| **2** | **ຈຳນວນພະນັກງານ ຂະແໜງ ໂທລະຄົມ** | | | | |
| **-** | ພະນັກງານ ທັງໝົດ | ຄົນ | 4,757 | 5,290 | 5,423 |
| **-** | ພະນັກງານ ທັງໝົດ( ຍິງ ) | ຄົນ | 1,620 | 1,222 | 1,949 |

ແຫຼ່ງຂໍ້ມູນ: ຈາກກົມໄປສະນີ ແລະ 4ບໍລິສັດໃຫ້ບໍລິການ ໂທລະຄົມ.

**<u>ເອກະສານທີ່ເປັນບ່ອນອີງ:</u>**


1. ກົດໝາຍວ່າດ້ວຍສະຖິຕິ ສະບັບປີ 2010.
2. ດຳລັດໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສະຖິຕິສະບັບເລກທີ:475/ລບ,ລົງວັນທີ18/10/2012 .
3. ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງ ປທສ ກ່ຽວກັບ ສະຖິຕິ ຂະແໜງ ໄປສະນີ, ໂທລະຄົມ ມະນາຄົມ ແລະ ການສື່ສານ ສະບັບເລກທີ 714/ປທສ ລົງວັນທີ 22 ພຶດສະພາ 2013.
4. ຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ 2010-2020 ສະບັບເລກທີ 250/ນຍ, ລົງວັນທີ: 13/05/2010




# ບໍລິການ ໄປສະນີ

- ໄປສະນີ ດ່ວນພິເສດ
- ຂົນສົ່ງ ພາຍໃນ-ຕ່າງປະເທດ
- ໄປສະນີ ດ່ວນລະຫວ່າງປະເທດ
- ພັດສະດຸໄປສະນີ ລະຫວ່າງປະເທດ
- ໄປສະນີລົງທະບຽນ ລະຫວ່າງປະເທດ
- ໄປສະນີລົງທະບຽນ ພາຍໃນປະເທດ
- ສະແຕມ ສະສົມ
- ຮັບສົ່ງ ສິ່ງຂອງ
- ຮັບຝາກ - ຈ່າຍເງິນ
- ຈຳໜ່າຍຜະລິດຕະພັນ ໄປສະນີ
- ບໍລິການ ອື່ນໆ




ນັບແຕ່ທ້າຍປີ 2014 ມາເຖິງປະຈຸບັນ, ຢູນິເທວ ໄດ້ສືບຕໍ່ລົງທຶນໃນການຂະຫຍາຍສະຖານີມືຖື 3G ເພີ່ມຕື່ມຈຳນວນ 1,000 ສະຖານີ ແລະ ໃນວັນທີ 26/08/2015 ຢູນິເທວ ໄດ້ເປີດນຳໃຊ້ເຄືອຂ່າຍ 4G ສຳລັບ 4 ແຂວງໃຫຍ່ຄື: ນະຄອນຫຼວງວຽງຈັນ, ສະຫວັນນະເຂດ, ຈຳປາສັກ ແລະ ຫຼວງພະບາງ. ລວມທັງໝົດສູນສະຖານີມືຖືຂອງ ຢູນິເທວ ແມ່ນມີຫຼາຍກ່ວາ 4,000 ສະຖານີ ຄຽງຄູ່ກັນນັ້ນ ຢູນິເທວ ແມ່ນສືບຕໍ່ປັບປຸງຄຸນນະພາບເຄືອຂ່າຍ ເພື່ອຮອງຮັບການນຳໃຊ້ອິນເຕີເນັດຂອງລູກຄ້າ.


SKY TELECOM
ບໍລິສັດລັດ ສະກາຍ ໂທລະຄົມ
SKY TELECOM STATE COMPANY
ບໍລິການ ອິນເຕີເນັດຄວາມໄວສູງ
High Speed Internet Service
IPLC
ບໍລິການສາຍເຊົ່າ
ລະຫວ່າງປະເທດ
DPLC
ບໍລິການສາຍເຊົ່າພາຍໃນປະເທດ
FTTx
ບໍລິການອິນເຕີເນັດຄວາມໄວສູງໃຊ້ສາຍແກ້ວໄຍແສງ
ບໍລິການອິນເຕີເນັດ Fiber
Internet Fiber Leased line
Sale Service
Installtation
Entertrain
Conferance
ສະຖານທີ່: ສຳນັກງານໃຫຍ່ ບໍລິສັດລັດ ສະກາຍ ໂທລະຄົມ, ບ ສາຍລົມ, ມ ຈັນທະບູລີ, ນະຄອນຫຼວງວຽງຈັນ
Venue: Head office of Sky Telecom, Saylom Village, Chanthabouly District, Vientiane Capital
Website: www.skytel.com.la, Call Center: 021 215353


ETL Mobile
E-Topup
ETL 3G
The World is yours
pstn
ໂທລະສັບຕັ້ງໂຕະ
etl internet
ETL
ບໍລິສັດ ອີທີແອລ ມະຫາຊົນ
ETL PUBLIC COMPANY
IR
eTalk
ETL
@home
ສາຍເຊົ່າ
Leased Line
ອີທີແອລ ຢູ່ຄຽງຄູ່ທ່ານ ທຸກທີ່... ທຸກເວລາ...
ETL Always with You...
ສອບຖາມຂໍ້ມູນ
135 ຫຼື 021 260076
www.etllao.com
www.facebook.com/etlpubliccompany



ທ່ານສາມາດຂຶ້ນທະບຽນເບີມືຖືແບບຕື່ມເງິນ
ໂດຍຜ່ານ 2 ຊ່ອງທາງ:
ສົ່ງ SMS ຫຼື 5551
M-Phone
Win-phone
Net sim
ສາມາດເລືອກໄດ້ 2 ພາສາ
ພິມພາສາລາວ
ຊື່#ນາມສະກຸນ#ວັນເດືອນປີເກີດ#ເລກບັດປະຈຳຕົວ ຫຼື ສຳມະໂນຄົວ ຫຼື ໜັງສືຜ່ານແດນ#ບ້ານຢູ່ປະຈຸບັນ#ເມືອງ#ແຂວງ
ສົ່ງໄປ 5551
ຮັບມູນຄ່າລ້າໆ 10,000 ກີບ ເມື່ອລົງທະບຽນນຳໃຊ້
Type English
Name#Family name#dete of birth#ID card or Passport No.#Address#District#Province
Send to 5551
Get Free 10,000 kip after Registration
ຕົວຢ່າງ/Sample
ນ ສຸກສະຫວັນ#ສູນທະລາ#09/09/1999#1234#ສາຍລົມ#ຈັນທະບູລີ#ນະຄອນວຽງຈັນ
Ms souksavavanh#soundala#09/09/1999#1234#saylom#chanthabouly#Vte
ສົ່ງໄປ 5551 / Send to 5551
ສອບຖາມຂໍ້ມູນເພີ່ມເຕີມໂທ: 101 ຫຼື *101 ແລ້ວໂທອອກ | www.laotel.com | www.facebook.com/laotel

